# ແຜນການສອນ

# ບົດຮຽນໂຮງຮຽນວັນອາທິດ

## ວັນອາທິດ ທີ 15 ກໍຣະກະດາ- 2007 ( 07-15-2007 )

## ແບ່ງປັນເຣື່ອງພຣະຄຣິດໃຫ້ກັບທຸກຄົນ:

**ຂໍ້ພຣະຄັມພີໃນບົດຮຽນ:** ກິຈການ 10:24-29, 34-36, 42-48

**ຄຳຖາມແຫ່ງຊີວິດ:** ຂ້າພະເຈົ້າຈະແບ່ງປັນຂ່າວປະເສີດໃຫ້ກັບຜູ້ໃດ?

**ຄວາມຈິງໃນພຣະຄັມພີ:** ເພາະວ່າພຣະເຈົ້າປະທານຄວາມລອດພົ້ນໃຫ້ແກ່ມະນຸດທຸກ ໆ ຄົນ, ພວກເຮົາຈຳເປັນຕ້ອງແບ່ງປັນຂ່າວປະເສີດນີ້ໃຫ້ແກ່ທຸກ ໆ ຄົນ ແລະເຊີນຊວນເຂົາເຈົ້າຮັບເຊື່ອໃນພຣະເຢຊູຄຣິດ.

**ຜົນສະທ້ອນຕໍ່ຊີວິດ:** ບົດຮຽນນີ້ໄດ້ແຕ່ງຂຶ້ນມາເພື່ອຊ່ອຍທ່ານໃຫ້ເຮັດພາກສ່ວນຂອງທ່ານໃນໂບດຕາມຄາດໝາຍທີ່ພຣະເຈົ້າໄດ້ຊົງຕັ້ງໄວ້ໂດຍ:

- ການຮັບຮູ້ວ່າຂ່າວປະເສີດນັ້ນແມ່ນສຳລັບມະນຸດທຸກ ໆ ຄົນ ແລະ
- ການກ້າວອອກຈາກຄວາມສຸກສ່ວນຕົວເພື່ອແບ່ງປັນເຣື່ອງພຣະເຢຊູໃຫ້ກັບຄົນອື່ນ ໃນເມື່ອພຣະເຈົ້າເປີດໂອກາດໃຫ້.

### ການຈັດຕຽມຂອງຄຣູ

1. ອະທິຖານຂໍການຊົງນຳຈາກອົງພຣະວິນຍານບໍຣິສຸດ ກ່ອນເລີ້ມສຶກສາພຣະຄັມພີແລະບົດຮຽນ
2. ສຶກສາຂໍ້ພຣະຄັມພີທີ່ໃຊ້ໃນບົດຮຽນນີ້ ດ້ວຍການຕຶກຕອງ, ພິຈາຣະນາ
3. ສຶກສາບົດຮຽນຂອງນັກຮຽນ ເພື່ອຈະໄດ້ເຂົ້າໃຈແຈ້ງໃນບົດຮຽນທີ່ຈະນຳໄປສອນ
4. ອ່ານ "**ແຜນການສອນ**", ໝາຍບ່ອນສຳຄັນໄວ້, ປັບປຸງ, ແກ້ໄຂ, ຖ້າມີເຣື່ອງປະກອບຫລືຕົວຢ່າງກໍຈົດບັນທຶກໄວ້
5. ເຮັດກອບປີ້(ສຳເນົາ) ບົດຮຽນຂອງນັກຮຽນ ໃຫ້ພຽງພໍກັບຈຳນວນນັກຮຽນ.

### ແຜນການສອນ

1. ແຈກຢາຍບົດຮຽນຂອງນັກຮຽນ ໃຫ້ນັກຮຽນທຸກຄົນ.
2. ສຳຣວດຈຳນວນນັກຮຽນ ຖາມຂ່າວຫາຜູ້ທີ່ຂາດເພື່ອຈະໄດ້ສົ່ງຂ່າວຫາແລະອະທິຖານເພື່ອ.
3. ຖາມນັກຮຽນວ່າເຂົາເຈົ້າໄດ້ຮຽນເຣື່ອງຫຍັງໃນວັນທິດທີ່ຜ່ານມາ ເພື່ອລື້ມຄືນຄວາມຊົງຈຳ.
4. ໃຫ້ນັກຮຽນຄົນນຶ່ງແບ່ງປັນ 2-3 ນາທີ ຈາກປະສົບການຊີວິດກັບພຣະເຈົ້າໃນອາທິດທີ່ຜ່ານມາ, ຄຳພຍານສັ້ນໆ.
5. ອະທິຖານເປີດຫ້ອງຮຽນ, ເພື່ອການຮຽນແລະຜູ້ຂາດການຮຽນມື້ນີ້ ແລະເລີ້ມຕົ້ນໃນການສອນ.

### ບົດນຳ:

1. ເຮັດວຽກງານໃນໂບດໃຫ້ຖືກຕ້ອງຕາມຄາດໝາຍ.
2. ຢ່າໃຫ້ມີສິ່ງນຶ່ງສິ່ງໃດຖ່ວງດຶງການປະກາດຂ່າວປະເສີດຂອງທ່ານໄດ້.
3. ບາງເທື່ອ ຄວາມເຫັນແກ່ຕົວ, ຄວາມຢ້ານກົວ, ທຸຣະກິຈ ແລະສິ່ງອື່ນ ໆ ທາງຝ່າຍໂລກນີ້ກໍເປັນສິ່ງທີ່ດຶງລາກແກ່ເຮົາອອກຈາກການເຮັດວຽກງານຂອງພຣະເຈົ້າໄດ້.

4. ນຳພານັກຮຽນໄປອ່ານພຣະທັມ **ເອຊາຢາ 55:8-11** ແລ້ວຈະໄດ້ຮູ້ວ່າແຜນການຂອງພຣະເຈົ້າ ຄວາມຄິດຂອງ ພຣະເຈົ້ານັ້ນມີຄວາມແຕກຕ່າງ ແລະໄກຈາກແຜນການ ແລະຄວາມຄິດຂອງມະນຸດເຮົາ.

## 1. <u>ເອົາຊະນະຕໍ່ສິ່ງທີ່ກີດຂວາງ:</u> ( ກິຈການ 10:24-29

1) ຂໍໃຫ້ນັກຮຽນຜູ້ນື່ງອາສາສມັກອ່ານ ກິຈການ 10:24-29

2) **ຄຳຖາມ:** (1) ໃນລະຍະຜ່ານມາມີຜູ້ໃດໄດ້ຄິດຕຶກຕອງເຖິງໂອກາດທີ່ແບ່ງປັນຂ່າວປະເສີດແດ່ບໍ່?
(2) ມີຜູ້ໃດເຂົ້າໃຈເຣື່ອງຂ່າວປະເສດດ້ວຍຕົນເອງໂດຍບໍ່ໄດ້ຍິນ ໄດ້ຟັງຈາກຄົນອື່ນຫລືບໍ່?
(3) ເປັນຫຍັງຈຶ່ງມີແຕ່ຄົນຈຳນວນນ້ອຍ ໆ ເທົ່ານັ້ນທີ່ມາເຊື່ອໃນພຣະເຢຊູຄຣິດ?

3) **ອະທິບາຍ:** ພຣະຜູ້ເປັນເຈົ້າໄດ້ຊົງໃຫ້ນິມິດໝາຍແກ່ອັຄສາວົກເປໂຕ ໂດຍທີ່ບໍ່ໃຫ້ຍອມແພ້ຕໍ່ການດູຖູກຂອງ ຄົນຕ່າງຊາດ ພ້ອມກັນນັ້ນບໍ່ໃຫ້ລົ້ມເລີກໃນການປະຕິບັດຣະບຽບທີ່ມີຢູ່ໃນພາກພັນທະສັນຍາເດີມ.

- ພຣະເຢຊູຄຣິດເຈົ້າໄດ້ຊົງມີແຜນການໃຫ້ຄົນຕ່າງຊາດມີສ່ວນໃນພຣະວິຫານອັນຕລອດໄປເປັນນິດຂອງພຣະອົງ ເຊັ່ນກັນ ແລະພຣະອົງໄດ້ໃຫ້ທ່ານເປໂຕເປັນຜູ້ເລີ້ມປະກາດວ່າ " ບໍ່ຄວນຖືຄົນນຶ່ງຄົນໃດວ່າເປັນຄົນຕ້ອງຫ້າມ ຫລືບໍ່ສະອາດ.
- ພຣະເຈົ້າໄດ້ຊົງຈັດຕຽມທ່ານເປໂຕໃຫ້ໄປພົບກັບພວກຕ່າງຊາດທີ່ກົດໝາຍຂອງຢິວຫ້າມບໍ່ໃຫ້ພົບ. ພຣະເຈົ້າ ໃຫ້ຄວາມໝັ້ນໃຈ ແລະໜູນໃຈໃຫ້ທ່ານໄປ (ຂໍ້ທີ 19-20)
- ທ່ານຄິດວ່າຈະຕອບສນອງຢ່າງໃດຖ້າຫາກທ່ານຢູ່ໃນຕຳແໜ່ງຂອງທ່ານເປໂຕນັ້ນ?
- ເປັນຫຍັງພວກເຮົາຈຶ່ງຈຳເປັນຕ້ອງປະກາດຂ່າວປະເສີດ?

**ຄຳຖາມເພື່ອແລກປ່ຽນຄວາມຄິດເຫັນໃນພຣະທັມ:** ກິຈການ 10:24-29

1. ຊົນຊາດ, ສະພາບການເງິນ, ການເມືອງ ຫລືວິຖີທາງການດຳເນີນຊີວິດ, ແມ່ນອັນໃດເປັນການຖ່ວງດຶງ ການປະກາດຂອງທ່ານ? ທ່ານຈະທຳລາຍສິ່ງທີ່ກີດຂວາງນັ້ນໄດ້ຢ່າງໃດ?
2. ຖ້າຫາກພຣະເຈົ້າໃຫ້ນິມິດເຣື່ອງການເປັນແບບຢ່າງນິສັຍໃຈຄໍຂອງທ່ານໃຫ້ແກ່ຄົນອື່ນນັ້ນແມ່ນການບັງຄັບຫລືບໍ່?
3. ພຣະເຈົ້າໄດ້ຈັດຕຽມທ່ານໃຫ້ຊ່ອຍເຫລືອເພື່ອນບ້ານ ຫລືບ່ອນທຳງານຂອງທ່ານຢ່າງໃດແດ່?
4. ທ່ານໄດ້ຮ່ວມຈິດຮ່ວມໃຈກັບພຣະວິນຍານບໍຣິສຸດນຳຄົນຫລົງຫາຍໃຫ້ພົ້ນຈາກບາບແລ້ວຫລືບໍ່?

## 2. <u>ກ່າວຄຳບອກເຕືອນຂອງພຣະເຈົ້າ:</u> ກິຈການ 10:34-36, 42,43

1) ຂໍໃຫ້ນັກຮຽນອາສາສມັກອ່ານພຣະທັມ ກິຈການ 10:34-36, 42,43

2) **ແນະນຳ:** ເປໂຕໄດ້ເທສນາເຣື່ອງຄວາມສງົບສຸກທາງພຣະເຢຊູຄຣິດ ແລະຈົດຈໍ່ໃນການເປັນພຣະຜູ້ ເປັນເຈົ້າຂອງພຣະອົງ ໂດຍປາສຈາກຂໍ້ແມ້ ຫລືໃຈ້ແຍກຊົນຊາດ, ຊຶ່ງພຣະເຈົ້າບອກວ່າບໍ່ໃຫ້ເລືອກໜ້າ ໃນຂໍ້ ( 34) ເຊັ່ນກັນທ່ານເປໂຕບອກວ່າ ພຣະເຈົ້າບໍ່ຊົງເລືອກໜ້າຜູ້ໃດ.

3) **ອະທິບາຍ:** - ພຣະເຈົ້າຈະໃຫ້ຄວາມລອດພົ້ນແກ່ທຸກ ໆ ຄົນ, ໃນທຸກ ໆ ຊາດ ທີ່ເຂົາເຊື່ອໄວ້ວາງໃຈ ໃນພຣະບຸດຂອງພຣະອົງຄື ພຣະເຢຊູຄຣິດເຈົ້າ.

- ທ່ານເປໂຕໄດ້ປະກາດຂ່າວປະເສີດເຣື່ອງພຣະເຢຊູຊົງຮັບບັບຕິສມາ ແລະໄດ້ຊົງເຈີມດ້ວຍພຣະວິນຍານ ບໍຣິສຸດ, ການທຳພາຣະກິດອັນອັສຈັນຂອງພຣະອົງ,

- ຄວາມລອດພົ້ນມີໄວ້ສຳລັບທຸກຄົນ, ແຕ່ຊາຕານໄດ້ອອກກົນອຸບາຍທໍຣະມານພຣະເຢຊູຈົນເຖິງແກ່ຄວາມຕາຍ

ແຕ່ພຣະອົງກໍໄດ້ຟື້ນຄືນມາຈາກຕາຍ ແລະໄດ້ປາກົດພຣະອົງເອງກ່ອນຈະສະເດັດຂຶ້ນສວັນ, ພຣະອົງໄດ້ໃຫ້ຄຳໝັ້ນສັນຍາແດ່ພວກເຮົາວ່າ ຈະປະທານຊີວິດນິຣັນໃຫ້ແກ່ພວກເຮົາ ແລະພຣະອົງກໍຊົງເປັນຜູ້ພິພາກສາສູງສຸດ.

**ຄຳຖາມເພື່ອແລກປ່ຽນຄວາມຄິດເຫັນໃນພຣະທັມ:** ກິຈການ 10:34-36,42,43

1. ຄຳເທສນາຂອງທ່ານເປໂຕໃນບົດທີ (10:34-43) ໄດ້ປຽບທຽບໃສ່ກັບ ບົດທີ (2:36-39 ແລະ 3:17-23 ຢ່າງໃດ? ຈາກການບອກກ່າວທັງສາມນີ້ ແມ່ນຫຍັງແດ່ທີ່ສະແດງເຖິງການໄວ້ວາງໃຈໃນຂ່າວປະເສີດ?
2. ໃນຄວາມພຍາຍາມທີ່ຈະປະກາດຂ່າວປະເສີດຂອງທ່ານນັ້ນທ່ານມີວິທີການແຕກຕ່າງກັນບໍ່?
3. ທ່ານເຄີຍໄດ້ປະກາດເຣື່ອງພຣະເຢຊູຄຣິດເປັນປະຈຳ ແລະເປັນທາງການຫລືບໍ່?

## 3. ຍອມຮັບທຸກ ໆ ຄົນທີ່ຕ້ອນຮັບເອົາພຣະເຢຊູຄຣິດ: ກິຈການ 10:44-48

1) ຂໍໃຫ້ນັກຮຽນອາສາສມັກອ່ານ ກິຈການ 10:44-48
2) **ອະທິບາຍ:** ມີທາງດຽວເທົ່ານັ້ນທີ່ຈະໄດ້ຮັບຊີວິດນິຣັນໄດ້ຄື: ເຊື່ອໃນຂ່າວປະເສີດແລະລອດພົ້ນໄດ້ໂດຍທາງຄວາມເຊື່ອເທົ່ານັ້ນ. ເພາະວ່າມີພຣະເຈົ້າເທົ່ານັ້ນທີ່ໃຫ້ພຣະວິນຍານບໍຣິສຸດລົງມາສະຖິດຢູ່ນຳຜູ້ທີ່ເຊື່ອ (ຂໍ້ທີ44)

- ການເວົ້າພາສາແປກ ໆ ຂອງຊາວຕ່າງຊາດນັ້ນເປັນອຸປກອນຂອງຄຣິສຕຽນຊາວຢິວ, ເປັນການບອກໃຫ້ຮູ້ເຖິງພຣະວິນຍານສະຖິດຢູ່ນຳລະຫວ່າງຊາວຢິວແລະຊາວຕ່າງຊາດ. ທີ່ສຳຄັນກໍຄືໃຫ້ພວກເຮົາຍອມຮັບ ເພື່ອການຢູ່ຮ່ວມກັນໂດຍຖືວ່າເຂົາເຈົ້າໄດ້ຮັບເອົາພຣະເຈົ້າຄືກັນກັບພວກເຮົາ.
- ສິ່ງສຳຄັນຂອງທ່ານເປໂຕທີ່ຍອມຮັບຄົນຕ່າງຊາດທີ່ນັບຖືພຣະວິນຍານ ພ້ອມກັນນັ້ນທ່ານກໍຮູ້ວ່າ ແມ່ນການອະນຸຍາດຂອງພຣະເຈົ້າ ແລະສັ່ງໃຫ້ຮັບບັບຕິສະມາໃຫ້ເປັນການປະຕິບັດແກ່ຄົນຕ່າງຊາດ (ຂໍ້ທີ 47-48)

**ຄຳຖາມເພື່ອແລກປ່ຽນຄວາມຄິດເຫັນໃນພຣະທັມ:** ກິຈການ 10:44-48

1. ແມ່ນຫຍັງເປັນປະສົບການອັນປລາດຍິ່ງໃຫຍ່ຂອງທ່ານໃນການສຳຜັດຂອງພຣະເຈົ້າ?
2. ທ່ານໄດ້ຮຽນຫຍັງແດ່ໃນການປະສົບການຢ່າງນີ້?
3. ທ່ານຈະລ້ຽງດູຜູ້ທີ່ເຊື່ອໃໝ່ໃນໂບດຂອງທ່ານຢ່າງໃດ?
4. ທ່ານຈະພົວພັນເຂົາດ້ວຍຄວາມນິ້ມນວນເພື່ອຈະນຳເຂົາໃຫ້ຕິດພັນຢູ່ກັບໂບດໄດ້ຢ່າງໃດ?
5. ທ່ານຈະຊ່ວຍພັທນາເຂົາໃຫ້ອ່ານພຣະທັມ ແລະຈະເຣີນຂຶ້ນໃນໃນຣາຊອານາຈັກຂອງພຣະເຈົ້າໄດ້ຢ່າງໃດ?

## ບົດຮຽນພຣະຄັມພີແຫ່ງຄວາມຈິງ:

- ບັນດາຜູ້ທີ່ເຊື່ອທັງຫລາຍບໍ່ຕ້ອງໃຫ້ຄວາມຄິດໃຫ້ເຂົາຄິດເບິ່ງກ່ອນ ຫລືປ່ອຍໃຫ້ມີກຸ່ມໃດກຸ່ມນຶ່ງມາເປັນອຸປສັກຕໍ່ໂອກາດການປະກາດ.
- ເມື່ອພຣະເຈົ້າໃຫ້ໂອກາດການແບ່ງປັນຂ່າວປະເສີດ, ບັນດາຜູ້ທີ່ເຊື່ອກໍຄວນແບ່ງປັນຂ່າວປະເສີດນັ້ນໃຫ້ກັບທຸກຄົນ.
- ໃຫ້ບັນດາຜູ້ທີ່ເຊື່ອທັງຫລາຍຮັບຮູ້ທຸກຄົນທີ່ເຊື່ອໄວ້ວາງໃຈໃນພຣະເຢຊູຄຣິດວ່າເປັນສະມາຊິກໃນຄອບຄົວຂອງພຣະເຈົ້າ.

ອຸປຖັມໂດຍ ລາວຊາວເທີນບັບຕິສສັມພັນ. www.lsbf.org. by JH